**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ — ເລກທີ 1163 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 4900 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

**ລັດຖະມົນຕີ ອອກຂໍ້ຕົກລົງ:**

### ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 4900 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 4900 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 4900 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

### ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 4900 MHz

ແຖບຄວາມຖີ່ວິທະຍຸສື່ສານ 4900 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຄື້ນຄວາມຖີ່ວິທະຍຸສື່ສານຕາມເວລາ Time Division Duplex (TDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານແຕ່ 4800 – 4990 MHz (190 MHz) ຊຶ່ງແບ່ງອອກເປັນ 38 ສ່ວນ (Block), ແຕ່ລະສ່ວນມີຄວາມກ້ວາງ 5 MHz ເລີ່ມແຕ່ສ່ວນທີ B1 – B38 ;

3. ກຳນົດແຖບຄວາມຖີ່ປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນຕາມຄວາມເໝາະສົມໃນແຕ່ລະໄລຍະ ແຕ່ຕ້ອງຮັບປະກັນບໍ່ກໍ່ໃຫ້ເກີດການລົບກວນຜູ້ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານຂ້າງຄຽງ.

**ມາດຕາ 4: ແຜນອາດແຖບຄວາມຖີ່ວິທະຍຸສື່ສານ 4900 MHz**

| | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| B1 5MHz | B2 5MHz | B3 5MHz | B4 5MHz | B5 5MHz | B6 5MHz | B7 5MHz | B8 5MHz | B9 5MHz | B10 5MHz | B11 5MHz | B12 5MHz | B13 5MHz | B14 5MHz | B15 5MHz | B16 5MHz | B17 5MHz | B18 5MHz | B19 5MHz | B20 5MHz | B21 5MHz | B22 5MHz | B23 5MHz | B24 5MHz | B25 5MHz | B26 5MHz | B27 5MHz | B28 5MHz | B29 5MHz | B30 5MHz | B31 5MHz | B32 5MHz | B33 5MHz | B34 5MHz | B35 5MHz | B36 5MHz | B37 5MHz | B38 5MHz |

4800 MHz 4990 MHz

**ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 4900 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ.

**ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ**

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 4900 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການ ຂອງ ສປປ ລາວ ແລະ ລະບຽບການຄື້ນຄວາມຖີ່ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ໂດຍສະເພາະຂໍ້ທີ 5.441B, Resolution 223 ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃນແຖບນີ້ ຕ້ອງໃຊ້ວິທີການ Network Synchronization ເພື່ອເປັນການປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນເຊິ່ງກັນ ແລະ ກັນ ລະຫວ່າງຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານນີ້;
4. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
5. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
6. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU);

7. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

**ມາດຕາ 7: ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 8: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີ**

ທັນສະໄໝ ກົມມະສິດ